**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງປ້ອງກັນຄວາມສະຫງົບ
ຫ້ອງວ່າການກະຊວງ

ເລກທີ..53......./ຫວກ
ນະຄອນຫຼວງວຽງຈັນ, ວັນທີ.12.ກຸມພາ....2026

# ແຈ້ງການ

**ເຖິງ:** ຫ້ອງການບັນດາກະຊວງ, ອົງການທຽບເທົ່າ, ສະພາແຫ່ງຊາດ, ອົງການປົກຄອງທ້ອງຖິ່ນຜູ້ປະກອບການ, ທະຫານ, ຕໍາຫຼວດ ແລະ ປະຊາຊົນບັນດາເຜົ່າ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການຢຸດເຊົາອອກປຶ້ມສໍາມະໂນຄົວໃຫ້ພົນລະເມືອງລາວແບບເກົ່າ ແລະ ຫັນມານໍາໃຊ້ໜັງສືຢັ້ງຢືນຂໍ້ມູນສໍາມະໂນຄົວແທນ.

- ອີງຕາມ ດໍາລັດ ວ່າດ້ວຍຖານຂໍ້ມູນພົນລະເມືອງ ແລະ ບັດປະຈໍາຕົວ ສະບັບເລກທີ 526/ລບ, ລົງວັນທີ 04 ສິງຫາ 2025;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງສໍາມະໂນຄົວ ແລະ ບັດປະຈໍາຕົວພົນລະເມືອງ ສະບັບເລກທີ 1176/ປກສ, ລົງວັນທີ 03 ມິຖຸນາ 2025;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 1689/ປກສ, ລົງວັນທີ 17 ກັນຍາ 2021;
- ອີງຕາມ ແຈ້ງການ ການຂໍຫັນການຈົດທະບຽນສໍາມະໂນຄົວແບບເກົ່າ ມາເປັນການຈົດທະບຽນສໍາມະໂນຄົວແບບເອເລັກໂຕຣນິກແບບທັນສະໄໝ ສະບັບເລກທີ 122/ຫສນຍ, ລົງວັນທີ 28 ມັງກອນ 2026.

ຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບ **ຂໍຖືເປັນກຽດແຈ້ງມາຍັງ** ຫ້ອງການບັນດາກະຊວງ, ອົງການທຽບເທົ່າ, ສະພາແຫ່ງຊາດ, ອົງການປົກຄອງທ້ອງຖິ່ນ, ຜູ້ປະກອບການ, ທະຫານ, ຕໍາຫຼວດ ແລະ ປະຊາຊົນບັນດາເຜົ່າ ໃນຂອບເຂດທົ່ວປະເທດ ຊາບດັ່ງນີ້:

1. ກະຊວງປ້ອງກັນຄວາມສະຫງົບ ໄດ້ຢຸດເຊົາການອອກປຶ້ມສໍາມະໂນຄົວໃຫ້ພົນລະເມືອງລາວແບບເກົ່າ ຫັນມາຈົດທະບຽນສໍາມະໂນຄົວແບບເອເລັກໂຕຣນິກແບບທັນສະໄໝ ແລະ ຫັນມານໍາໃຊ້ໜັງສືຢັ້ງຢືນຂໍ້ມູນສໍາມະໂນຄົວ(ແບບຟອມ ສຄ07) ຕາມລະບຽບຫຼັກການຂອງກະຊວງປ້ອງກັນຄວາມສະຫງົບ ແທນປຶ້ມສໍາມະໂນຄົວແບບເກົ່າ.
2. ສໍາລັບບຸກຄົນ ແລະ ຄອບຄົວທີ່ມີປຶ້ມສໍາມະໂນຄົວອອກໃຫ້ໃນໄລຍະຜ່ານມາ ກໍ່ຍັງສາມາດນໍາໃຊ້ໄດ້ຈົນກວ່າຈະມີແຈ້ງການລຶບລ້າງ, ສ່ວນບຸກຄົນ ແລະ ຄອບຄົວ ທີ່ມີຂໍ້ມູນສໍາມະໂນຄົວຢູ່ໃນລະບົບເອເລັກໂຕຣນິກແລ້ວ ແມ່ນໃຫ້ນໍາໃຊ້ໜັງສືຢັ້ງຢືນຂໍ້ມູນສໍາມະໂນຄົວ ແທນປຶ້ມສໍາມະໂນຄົວແບບເກົ່າ.
3. ສໍາລັບພົນລະເມືອງຜູ້ທີ່ມີບັດປະຈໍາຕົວ ດິຈິຕ໋ອນ ແລ້ວ ສາມາດນໍາໃຊ້ບັດປະຈໍາຕົວ ດິຈິຕ໋ອນ ເປັນການຢັ້ງຢືນຕົວຕົນຂອງພົນລະເມືອງ ເພື່ອປະກອບທຸລະກໍາຕ່າງໆໄດ້ເຊັ່ນດຽວກັນ.

4. ພາກສ່ວນທີ່ສາມາດອອກໜັງສືຢັ້ງຢືນຂໍ້ມູນສຳມະໂນຄົວ (ແບບຟອມ ສຄ07) ມີ 03 ພາກສ່ວນຄື: ① ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ; ② ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ, ປກສ ແຂວງ; ③ ບັນດາກອງບັນຊາການ ປກສ ເມືອງ-ປກສ ນະຄອນ ໃນຂອບເຂດທົ່ວປະເທດ.
5. ບັນດາກະຊວງ, ອົງການທຽບເທົ່າ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ອຳນວຍຄວາມສະດວກໃນການປະກອບເອກະສານເຮັດທຸລະກຳຕ່າງໆ.

ດັ່ງນັ້ນ, ຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບ ຈຶ່ງແຈ້ງມາເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

**ເຊັນແທນ ຫົວໜ້າຫ້ອງວ່າການກະຊວງ**

**ຮອງຫົວໜ້າ ຫ້ອງວ່າການ**

ພົຈວ. ອານຸເດດ ຄູນຄຳ